ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສປປ ລາວ ສ້າງຄວາມເຂັ້ມແຂງໃຫ້ລະບົບສະຖາບັນການເງິນ




ທ່ານ ນາງ ໂພທິຈັນ ທຳມະວາ ວ່າການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສະເໜີຕໍ່ກອງປະຊຸມວິຊາສະເພາະທີ່ ທຫລ ຈັດຂຶ້ນເມື່ອກາງເດືອນ ສິງຫາ 2020 ໂດຍໄດ້ກ່າວວ່າ: ໃນ 5 ປີຜ່ານມາ ທຫລ ໄດ້ປັບປຸງວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ເຮັດໃຫ້ລະບົບສະຖາບັນການເງິນມີຄວາມໝັ້ນຄົງ ເຂັ້ມແຂງ ໂດຍສຸມໃສ່ການສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆຫຼາຍສະບັບ ແລະ ເຄື່ອງມືໃນການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ແລະ ວຽກງານຕ່າງໆ; ວຽກງານກວດກາທາງເອກະສານ ແລະ ກວດກາກັບທີ່ ໄດ້ຮັບການປັບປຸງເປັນແຕ່ລະໄລຍະ ໂດຍສະເພາະເຄື່ອງມືໃນການກວດກາ ເພື່ອໃຫ້ກຳໄດ້ຂໍ້ຄົງຄ້າງຕ່າງໆ ເພື່ອແກ້ໄຂຕາມລະບຽບໄດ້ກຳນົດໄວ້; ສຳລັບການກວດກາທະນາຄານທຸລະກິດ ກໍ່ໄດ້ລິເລີ່ມທົດລອງການວິເຄາະ-ກວດກາຕາມຄວາມສ່ຽງ, ການສ້າງຄູ່ມືຄຸ້ມຄອງຕາມຄວາມສ່ຽງ, ປັບປຸງແບບຟອມລາຍງານຖານະການເງິນສຳລັບທະນາຄານທຸລະກິດ ແລະ ພັດທະນາຕົວຊີ້ບອກທາງດ້ານການເງິນ.

ພ້ອມທັງດຳເນີນການກະກຽມສ້າງເງື່ອນໄຂໃຫ້ແກ່ການສ້າງລະບົບເຕືອນໄພລ່ວງໜ້າ ແລະ ການທົດສອບພາວະວິກິດ; ດຳເນີນການປັບປຸງລະບົບການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນໃຫ້ນັບມື້ເຂັ້ມແຂງ ໂດຍໄດ້ຫັນການຄຸ້ມຄອງທະນາຄານທຸລະກິດຈາກການຄຸ້ມຄອງຕາມລະບຽບການໄປສູ່ການຄຸ້ມຄອງຕາມຄວາມສ່ຽງຕາມມາດຕະຖານບາເຊວ ຊຶ່ງສຳເລັດການສ້າງແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວແຕ່ປີ 2017-2025 ແລະ ດຳເນີນການຈັດຕັ້ງປະຕິບັດແຜນແມ່ບົດດັ່ງກ່າວ ມາຮອດປະຈຸບັນແມ່ນມີຄວາມຄືບໜ້າຕາມແຜນການທີ່ວາງໄວ້.

ຜ່ານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ເຫັນວ່າ: ນັບແຕ່ປີ 2015 ລະບົບທະນາຄານໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງທັງປະລິມານ ແລະ ຄຸນນະພາບ, ມາຮອດເດືອນ 6/2020 ມີທະນາຄານທັງໝົດ 44 ທະນາຄານ ເພີ່ມຂຶ້ນ 3 ແຫ່ງ, ມີ 114 ສາຂາ ເພີ່ມຂຶ້ນ 26 ສາຂາ, ມີ 536 ໜ່ວຍບໍລິການເພີ່ມຂຶ້ນ 65 ໜ່ວຍ, ມີຕູ້ເອທີເອັມ 1.317 ໜ່ວຍເພີ່ມຂຶ້ນ 289 ໜ່ວຍ ທຽບໃສ່ປີ 2015. ຊັບສິນ, ໜີ້ສິນ ແລະ ທຶນທົ່ວລະບົບທະນາຄານ ຂະຫຍາຍຕົວເພີ່ມຂຶ້ນໃນແຕ່ລະປີ, ໃນເດືອນ 06/2020

ມີຊັບສິນທັງຫມົດ 156.833 ຕື້ກີບ ເພີ່ມຂຶ້ນສະເລ່ຍ 12,53% ຕໍ່ປີ; ມີໜີ້ສິນ 147.035 ຕື້ກີບ ເພີ່ມຂຶ້ນສະເລ່ຍ 9,66% ຕໍ່ປີ, ມີເງິນຝາກທັງໝົດ 117.968 ຕື້ກີບ ເພີ່ມຂຶ້ນສະເລ່ຍ 12,19% ຕໍ່ປີ, ມີບັນຊີເງິນຝາກທັງໝົດ 2.665.856 ບັນຊີ ເພີ່ມຂຶ້ນສະເລ່ຍ 10,71% ຕໍ່ປີ; ໜີ້ບໍ່ເກີດດອກອອກຜົນ (NPL) ກວມ 3,21% ຂອງຍອດສິນເຊື່ອທັງໝົດ ເພີ່ມຂຶ້ນສະເລ່ຍ 0,02% ຕໍ່ປີ ທຽບໃສ່ປີ 2015, ຄວາມພຽງພໍຂອງທຶນຂອງທະນາຄານທຸລະກິດ ໂດຍສະເລ່ຍຢູ່ໃນລະດັບ 13,84%.

ສຳລັບສະຖາບັນການເງິນ ມີສະຖາບັນການເງິນປະເພດຕ່າງໆ 180 ແຫ່ງ, ມີຊັບສິນທັງໝົດ 7.633 ຕື້ກີບ ເພີ່ມຂຶ້ນສະເລ່ຍ 37,70% ຕໍ່ປີ; ມີໜີ້ສິນທັງໝົດ 5.960 ຕື້ກີບເພີ່ມຂຶ້ນສະເລ່ຍ 35,31% ຕໍ່ປີ; ມີເງິນຝາກທັງໝົດ 1.217 ຕື້ກີບເພີ່ມຂຶ້ນສະເລ່ຍ 27,63% ຕໍ່ປີ, ມີບັນຊີເງິນຝາກ 204.358 ບັນຊີ; ອັດຕາສ່ວນ NPL ສະເລ່ຍ 1,7% ຂອງຍອດສິນເຊື່ອຂອງສະຖາບັນການເງິນທັງໝົດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ.

ຄຽງຄູ່ກັບນັ້ນ ເຫັນວ່າທະນາຄານທຸລະກິດ ແລະ ສະຖາບັນການເງິນໃນທົ່ວລະບົບ ໂດຍລວມມີຄວາມໝັ້ນຄົງ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງສາມາດປະຕິບັດລະບຽບຄວາມໝັ້ນຄົງທີ່ ທຫລ ວາງອອກໃນລະດັບດີ, ການດຳເນີນທຸລະກິດມີຜົນກຳໄລ, ໄດ້ມີການລິເລີ່ມການຄຸ້ມຄອງຕາມຄວາມສ່ຽງຕາມມາດຕະຖານບາເຊວ, ໄດ້ເປັນເຈົ້າການພັດທະນາຜະລິດຕະພັນ ແລະ ທັນເປັນທັນສະໄໝເຮັດໃຫ້ການບໍລິການມີຄວາມຫຼາກຫຼາຍ ສາມາດຕອບສະໜອງໄດ້ຄວາມຕ້ອງການຂອງຜູ້ບໍລິໂພກທາງການເງິນ, ປະກອບສ່ວນໃນການປະຕິບັດພາລະບົດບາດໃນການລະດົມທຶນ ເພື່ອສະໜອງທຶນຮອນດ້ານສິນເຊື່ອເຂົ້າໃນຂົງເຂດການຜະລິດ ແລະ ດຳເນີນທຸລະກິດໃນຂະແໜງການຕ່າງໆ ໂດຍສະເພາະການສະຫນອງທຶນຮອນໃຫ້ພາກສ່ວນວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຈຸນລະວິສາຫະກິດຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ອຳນວຍຄວາມສະດວກໃນການຊຳລະສະສາງຄ່າສິນຄ້າ ແລະ ບໍລິການທັງພາຍໃນ-ຕ່າງປະເທດ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ວຽກງານການຄ້າ, ການລົງທຶນທັງ ພາຍໃນ ແລະ ລະຫວ່າງປະເທດ.

**# ໂດຍ: ຣັດສະໝີ ດວງສັດຈະ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**